**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 14374 /ຍທຂ
ນະຄອນຫຼວງວຽງຈັນ, ວັນທີ 23 ມິຖຸນາ 2025

# ຂໍ້ຕົກລົງ
# ວ່າດ້ວຍທ່າເຮືອ

- ອີງຕາມ ກົດໝາຍ ວ່າດ້ວຍການທາງນ້ຳ ສະບັບເລກທີ 34/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 677/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມທາງນ້ຳ ສະບັບເລກທີ 13360 /ກທນ, ລົງວັນທີ 11 ມິຖຸນາ 2025.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານທ່າເຮືອ ເພື່ອເຮັດໃຫ້ການຄຸ້ມຄອງວຽກງານທ່າເຮືອ ມີປະສິດທິພາບ, ປະສິດທິຜົນ, ທັນສະໄໝ, ຍືນຍົງ ແລະ ເປັນມິດຕໍ່ສິ່ງແວດລ້ອມ ແນໃສ່ຮັບປະກັນໃຫ້ການດຳເນີນກິດຈະການຂົນສົ່ງທາງນ້ຳ ມີຄວາມສະດວກ, ໂລ່ງລ່ຽນ, ວ່ອງໄວ, ເປັນລະບຽບຮຽບຮ້ອຍ, ປອດໄພ, ສາມາດເຊື່ອມຈອດ, ເຊື່ອມໂຍງ ກັບອະນຸພາກພື້ນ ປະກອບສ່ວນເຂົ້າໃນວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການພັດທະນາ ເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ທ່າເຮືອ**

ທ່າເຮືອ ແມ່ນ ສະຖານທີ່ຈັດສັນໄວ້ໃຫ້ເຮືອທຸກປະເພດເຂົ້າຈອດທຽບທ່າ, ບໍລິການຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິນຄ້າອັນຕະລາຍ** ໝາຍເຖິງ ສິນຄ້າທີ່ມີ ວັດຖຸກຳມັນຕະພາບລັງສີ, ວັດຖຸນິວເຄຼຍ ແລະ ເຄມີ ທີ່ມີ ຫຼື ບໍ່ມີ ກິ່ນອາຍ ທີ່ເປັນອັນຕະລາຍຕໍ່ ສຸຂະພາບ, ຊີວິດຂອງ ຄົນ, ສັດ ແລະ ພືດ;

2. **ລານຕູ້ສິນຄ້າ** ໝາຍເຖິງ ສະຖານທີ່ເກັບຮັກສາ ແລະ ສ້ອມແປງຕູ້ສິນຄ້າ;

3. **ຜູ້ພັດທະນາ** ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດລົງທຶນໃຫ້ພັດທະນາທ່າເຮືອ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ;

4. **ຜູ້ລົງທຶນກິດຈະການ** ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດລົງທຶນກິດຈະການໃດໜຶ່ງ ຢູ່ພື້ນທີ່ໃນຂອບເຂດຂອງທ່າເຮືອ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນ ແລະ ເຄື່ອນໄຫວກ່ຽວກັບວຽກງານທ່າເຮືອ ຢູ່ ສປປ ລາວ.

## ໝວດທີ 2
## ຮູບແບບຂອງທ່າເຮືອ

**ມາດຕາ 5 ຮູບແບບຂອງທ່າເຮືອ**

ທ່າເຮືອ ມີ ສາມຮູບແບບ ດັ່ງນີ້:

1. ທ່າເຮືອສາກົນ;
2. ທ່າເຮືອທ້ອງຖິ່ນ;
3. ທ່າເຮືອປະເພນີ.

**ມາດຕາ 6 ທ່າເຮືອສາກົນ**

ທ່າເຮືອສາກົນ ແມ່ນ ທ່າເຮືອທີ່ໃຫ້ບໍລິການຂົນສົ່ງທາງນໍ້າ ລະຫວ່າງ ພາຍໃນ ແລະ ຕ່າງປະເທດ ຊຶ່ງມີໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ ຢ່າງຄົບຊຸດ ຕາມມາດຕະຖານເຕັກນິກ ທີ່ ກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ ແລະ ສອດຄ່ອງກັບ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

**ມາດຕາ 7 ທ່າເຮືອທ້ອງຖິ່ນ**

ທ່າເຮືອທ້ອງຖິ່ນ ແມ່ນ ທ່າເຮືອທີ່ໃຫ້ບໍລິການຂົນສົ່ງທາງນໍ້າ ລະຫວ່າງ ເມືອງ ກັບ ແຂວງ, ລະຫວ່າງ ແຂວງ ກັບ ແຂວງ ພາຍໃນປະເທດ ແລະ ລະຫວ່າງ ແຂວງ ກັບ ແຂວງ ຂອງປະເທດທີ່ມີຊາຍແດນ ແລະ ສັນຍາຂົນສົ່ງຮ່ວມກັນ ຊຶ່ງມີໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ ຢ່າງເໝາະສົມ ຕາມມາດຕະຖານເຕັກນິກ ທີ່ ກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ.

**ມາດຕາ 8 ທ່າເຮືອປະເພນີ**

ທ່າເຮືອປະເພນີ ແມ່ນ ທ່າເຮືອທີ່ໃຫ້ບໍລິການຂົນສົ່ງທາງນໍ້າ ລະຫວ່າງ ບ້ານ ກັບ ບ້ານ, ເມືອງ ກັບ ເມືອງ ພາຍໃນແຂວງ, ເມືອງ ກັບ ແຂວງ ພາຍໃນປະເທດ ແລະ ລະຫວ່າງ ເມືອງ ກັບ ເມືອງ ຂອງປະເທດທີ່ມີຊາຍແດນຮ່ວມກັນ ຫຼື ຕາມການຕົກລົງຂອງສອງຝ່າຍ ອີງຕາມຄວາມຈຳເປັນ ແລະ ເໝາະສົມ ເປັນຕົ້ນ ບຸນປະເພນີ, ຕະຫຼາດນັດ ແລະ ເຫດສະການອື່ນ ຊຶ່ງມີໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ ຢ່າງເໝາະສົມ ຕາມມາດຕະຖານເຕັກນິກ ທີ່ ກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ.

## ໝວດທີ 3
## ປະເພດຂອງທ່າເຮືອ

**ມາດຕາ 9 ປະເພດຂອງທ່າເຮືອ**

ທ່າເຮືອ ມີ ຫ້າປະເພດ ດັ່ງນີ້:

1. ທ່າເຮືອຂົນສົ່ງຜູ້ໂດຍສານ;
2. ທ່າເຮືອຂົນສົ່ງສິນຄ້າ;
3. ທ່າເຮືອບັກ;
4. ທ່າເຮືອສະເພາະ;
5. ທ່າເຮືອເຂດເສດຖະກິດພິເສດ.

**ມາດຕາ 10 ທ່າເຮືອຂົນສົ່ງຜູ້ໂດຍສານ**

ທ່າເຮືອຂົນສົ່ງຜູ້ໂດຍສານ ແມ່ນ ສະຖານທີ່ຈັດສັນໄວ້ໃຫ້ເຮືອເຂົ້າຈອດທຽບທ່າ ເພື່ອໃຫ້ບໍລິການຂົນສົ່ງຜູ້ໂດຍສານ ຊຶ່ງປະກອບດ້ວຍ ທາງຂຶ້ນ-ລົງ, ອາຄານຫ້ອງການ, ຮ້ານອາຫານ, ຮ້ານຄ້າ, ຈຸດຂາຍປີ້, ຈຸດບໍລິການຂໍ້ມູນ ຂ່າວສານ, ເດີ່ນຈອດລົດ ແລະ ສິ່ງອໍານວຍຄວາມສະດວກ ທີ່ຈໍາເປັນ.

**ມາດຕາ 11 ທ່າເຮືອຂົນສົ່ງສິນຄ້າ**

ທ່າເຮືອຂົນສົ່ງສິນຄ້າ ແມ່ນ ສະຖານທີ່ຈັດສັນໄວ້ໃຫ້ເຮືອຂົນສົ່ງສິນຄ້າເຂົ້າຈອດທຽບທ່າ ເພື່ອອໍານວຍຄວາມສະດວກ ໃນການຂົນສົ່ງສິນຄ້າ ປະເພດ ກະສິກໍາ, ອຸດສາຫະກໍາ, ວັດຖຸປະກອບ ແລະ ສິນຄ້າອື່ນ ຊຶ່ງປະກອບດ້ວຍສິ່ງອໍານວຍຄວາມສະດວກຕ່າງໆ ເປັນຕົ້ນ ທາງຂຶ້ນ-ລົງ, ການບໍລິການຄ່ຽນຖ່າຍ, ຍົກຍໍ, ເຄື່ອນຍ້າຍ, ລານສິນຄ້າ, ສາງສິນຄ້າ, ຫຸ້ມຫໍ່, ເກັບມ້ຽນສິນຄ້າ, ຕູ້ສິນຄ້າ.

**ມາດຕາ 12 ທ່າເຮືອບັກ**

ທ່າເຮືອບັກ ແມ່ນ ສະຖານທີ່ຈັດສັນໄວ້ໃຫ້ເຮືອ ເຂົ້າຈອດທຽບທ່າ ເພື່ອອໍານວຍຄວາມສະດວກ ໃນການຂົນສົ່ງ ຍານພາຫະນະ ແລະ ຜູ້ໂດຍສານ ຈາກຟາກໜຶ່ງ ໄປອີກຟາກໜຶ່ງຂອງແມ່ນໍ້າ.

**ມາດຕາ 13 ທ່າເຮືອສະເພາະ**

ທ່າເຮືອສະເພາະ ແມ່ນ ສະຖານທີ່ຈັດສັນໄວ້ໃຫ້ເຮືອ ເຂົ້າຈອດທຽບທ່າ ເພື່ອອໍານວຍຄວາມສະດວກ ໃນການຂົນສົ່ງສິນຄ້າສະເພາະ ເປັນຕົ້ນ ຖ່ານຫີນ, ໄມ້ທ່ອນ, ໄມ້ແປຮູບ, ຫີນພູ, ວັດຖຸໄວໄຟ, ສິນຄ້າອັນຕະລາຍ.

**ມາດຕາ 14 ທ່າເຮືອເຂດເສດຖະກິດພິເສດ**

ທ່າເຮືອເຂດເສດຖະກິດພິເສດ ແມ່ນ ສະຖານທີ່ທີ່ສ້າງຂຶ້ນເພື່ອນໍາໃຊ້ ໃນການດໍາເນີນກິດຈະການພາຍໃນຂອບເຂດເສດຖະກິດພິເສດ ເພື່ອອໍານວຍຄວາມສະດວກໃນການຂົນສົ່ງ ຜູ້ໂດຍສານ, ສິນຄ້າ ແລະ ຍານພາຫະນະ ທາງນໍ້າ.

ການກໍ່ສ້າງທ່າເຮືອເຂດເສດຖະກິດພິເສດ ຕ້ອງໄດ້ຮັບການຮັບຮອງ ແລະ ຢັ້ງຢືນມາດຕະຖານເຕັກນິກ ການອອກແບບ, ມູນຄ່າກໍ່ສ້າງ ຈາກກະຊວງການໂຍທາທິການ ແລະ ຂົນສົ່ງ.

# ໝວດທີ 4
## ຈຸດທີ່ຕັ້ງ, ມາດຕະຖານ ແລະ ເຂດສະຫງວນ ຂອງທ່າເຮືອ

### ມາດຕາ 15 ຈຸດທີ່ຕັ້ງຂອງທ່າເຮືອ

ທ່າເຮືອ ອາດຕັ້ງຢູ່, ເຂດຍຸດທະສາດ, ເຂດເສດຖະກິດພິເສດ ແລະ ສະຖານທີ່ທ່ອງທ່ຽວ ຂອງນະຄອນຫຼວງ, ແຂວງ ທີ່ເຊື່ອມຈອດກັບຕາໜ່າງຄົມມະນາຄົມ-ຂົນສົ່ງ ທາງບົກ, ທາງລົດໄຟ ແລະ ສະໜາມບິນ, ເປັນຈຸດທີ່ມີລະດັບນ້ຳເລິກ ເຮືອສາມາດທຽບທ່າໄດ້ຕາມການຮັບຮອງຜົນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ.

ສຳລັບທ່າເຮືອໃນອ່າງເກັບນ້ຳ ຂອງເຂື່ອນໄຟຟ້າ ຕ້ອງປະສານສົມທົບກັບ ຜູ້ພັດທະນາເຂື່ອນໄຟຟ້າ ເພື່ອການກຳນົດ ຈຸດທີ່ຕັ້ງ ແລະ ປະເພດ ຂອງທ່າເຮືອໃຫ້ມີຄວາມເໝາະສົມ.

### ມາດຕາ 16 ການກຳນົດຈຸດທີ່ຕັ້ງທ່າເຮືອ

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການໃນການຄົ້ນຄວ້າກຳນົດຈຸດທີ່ຕັ້ງຂອງທ່າເຮືອສາກົນ ໂດຍປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ແລ້ວສະເໜີລັດຖະບານ ພິຈາລະນາ.

ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ ເປັນເຈົ້າການໃນການຄົ້ນຄວ້າກຳນົດຈຸດທີ່ຕັ້ງຂອງທ່າເຮືອ ທ້ອງຖິ່ນ ແລະ ປະເພນີ ໂດຍປະສານສົມທົບກັບ ກະຊວງໂຍທາທິການ ແລະ ຂົນສົ່ງ, ພະແນກການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ແລ້ວນຳສະເໜີ ຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ ພິຈາລະນາ.

### ມາດຕາ 17 ເນື້ອທີ່ຂອງທ່າເຮືອ

ທ່າເຮືອ ຕ້ອງມີເນື້ອທີ່ ດັ່ງນີ້:

1. ທ່າເຮືອສາກົນ ມີເນື້ອທີ່ ແຕ່ 5.00 ເຮັກຕາ ຂຶ້ນໄປ, ມີຄວາມຍາວຂອງທ່າທຽບເຮືອ ຢ່າງໜ້ອຍ 500 ແມັດ;
2. ທ່າເຮືອທ້ອງຖິ່ນ ມີເນື້ອທີ່ ແຕ່ 3.00-4.90 ເຮັກຕາ, ມີຄວາມຍາວຂອງທ່າທຽບເຮືອ ຢ່າງໜ້ອຍ 300 ແມັດ;
3. ທ່າເຮືອປະເພນີ ມີເນື້ອທີ່ ແຕ່ 1.00-2.90 ເຮັກຕາ, ມີຄວາມຍາວຂອງທ່າທຽບເຮືອ ຢ່າງໜ້ອຍ 200 ແມັດ.

ສຳລັບການກຳນົດເນື້ອທີ່ຂອງທ່າເຮືອເຂດເສດຖະກິດພິເສດ ແລະ ທ່າເຮືອສະເພາະ ໃຫ້ອີງຕາມຈຸດພິເສດຂອງພື້ນທີ່ຕົວຈິງ.

### ມາດຕາ 18 ເຂດສະຫງວນຂອງທ່າເຮືອ

ເຂດສະຫງວນທ່າເຮືອ ແມ່ນ ພື້ນທີ່ ໜ້າດິນ, ໃຕ້ດິນ, ໜ້ານ້ຳ, ເທິງໜ້ານ້ຳ ແລະ ດິນພື້ນນ້ຳທີ່ສະຫງວນໄວ້ສຳລັບປ້ອງກັນຜົນກະທົບທາງລົບຕໍ່ທ່າເຮືອ ຊຶ່ງບໍ່ອະນຸຍາດໃຫ້ມີການ ກໍ່ສ້າງ, ປຸກສ້າງ ຫຼື ດຳເນີນກິດຈະການໃດໜຶ່ງ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກ ຂະແໜງການໂຍທາທິການ ແລະ ຂົນສົ່ງ ໂດຍປະສານສົມທົບກັບ ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ເຂດສະຫງວນທ່າເຮືອ ມີ ດັ່ງນີ້:

1. ທ່າເຮືອສາກົນ ດ້ານເໜືອນ້ຳໄຫຼ ຢ່າງໜ້ອຍ 1,000 ແມັດ, ດ້ານລຸ່ມນ້ຳໄຫຼ ຢ່າງໜ້ອຍ 2,000 ແມັດ;
2. ທ່າເຮືອທ້ອງຖິ່ນ ດ້ານເໜືອນ້ຳໄຫຼ ຢ່າງໜ້ອຍ 800 ແມັດ, ດ້ານລຸ່ມນ້ຳໄຫຼ ຢ່າງໜ້ອຍ 1,000 ແມັດ;
3. ທ່າເຮືອປະເພນີ ດ້ານເໜືອນ້ຳໄຫຼ ຢ່າງໜ້ອຍ 300 ແມັດ, ດ້ານລຸ່ມນ້ຳໄຫຼ ຢ່າງໜ້ອຍ 500 ແມັດ.

**ມາດຕາ 19 ການປົກປັກຮັກສາໝາຍເຂດແດນຂອງທ່າເຮືອ**

ກະຊວງການໂຍທາທິການ ແລະ ຂົນສົ່ງ ປະສານສົມທົບກັບ ກະຊວງການກະສິກຳ ແລະ ສິ່ງແວດລ້ອມ, ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ແລະ ຜູ້ພັດທະນາ ເພື່ອປົກປັກຮັກສາໝາຍ ເຂດແດນຂອງ ທ່າເຮືອ.

## ໝວດທີ 5
## ມາດຕະຖານຂອງທ່າເຮືອ

**ມາດຕາ 20 ມາດຕະຖານຂອງທ່າເຮືອ**

ທ່າເຮືອຕ້ອງມີມາດຕະຖານ ມີ ດັ່ງນີ້:

1. ເນື້ອທີ່ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 17 ຂອງຂໍ້ຕົກລົງສະບັບນີ້;
2. ໂຄງລ່າງພື້ນຖານທາງດ້ານເຕັກນິກ;
3. ຍານພາຫະນະກົນຈັກ ແລະ ອຸປະກອນ;
4. ລະບົບເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
5. ລະບົບຄວາມປອດໄພ;
6. ສິ່ງອຳນວຍຄວາມສະດວກອື່ນທີ່ຈຳເປັນ.

**ມາດຕາ 21 ໂຄງລ່າງພື້ນຖານທາງດ້ານເຕັກນິກ**

1. **ໂຄງລ່າງພື້ນຖານທາງດ້ານເຕັກນິກຂອງທ່າເຮືອສາກົນ ມີ ດັ່ງນີ້:**
   1) ທາງລົດ ຂຶ້ນ-ລົງ ທ່າທຽບເຮືອ ຢ່າງໜ້ອຍ ສອງຊ່ອງທາງຈະລາຈອນ;
   2) ປະຕູເຂົ້າ-ອອກ ແລະ ຮົ້ວອ້ອມ;
   3) ເຂດກວດກາດ້ວຍເຄື່ອງ ສາຍລັງສີ;
   4) ຂັ້ນໄດ ຂຶ້ນ-ລົງ ທ່າທຽບເຮືອ ສຳລັບ ຜູ້ໂດຍສານ;
   5) ສາງໃນຮົ່ມ ແລະ ສາງກາງແຈ້ງ;
   6) ອາຄານຜູ້ໂດຍສານ, ຫ້ອງບໍລິການ ແລະ ຫ້ອງການຄຸ້ມຄອງ;
   7) ຈຸດກວດກາສິນຄ້າ;
   8) ສາງເກັບຮັກສານ້ຳມັນເຊື້ອໄຟ;
   9) ສາງເກັບຮັກສາສິນຄ້າອັນຕະລາຍ;
   10) ລານຕູ້ສິນຄ້າ, ລານຈອດລົດບັນທຸກ;
   11) ຈຸດຊັ່ງຊັ່ງນ້ຳໜັກ;
   12) ຫ້ອງຄວບຄຸມທີ່ມີຫ້ອງນ້ຳສຳລັບຜູ້ມີອາການຕິດພະຍາດລະບາດ ແລະ ຫ້ອງກັກຜູ້ຕ້ອງຫາຄະດີ;
   13) ອາຄານມອດໄຟ, ຄວບຄຸມໄຟຟ້າ ແລະ ເຄື່ອງຈັກໄຟຟ້າສຳຮອງ;
   14) ຫ້ອງນ້ຳສາທາລະນະ, ລະບົບລະບາຍນ້ຳ, ປ້ອມຍາມເຂົ້າ-ອອກ, ເຂດສີຂຽວ, ເຄື່ອງກະຈາຍສຽງ ແລະ ບ່ອນເກັບມ້ຽນຂີ້ເຫຍື້ອ;
   15) ສະຖານທີ່ຈອດຍານພາຫະນະ ແລະ ພື້ນທີ່ສາທາລະນະ ຕາມຄວາມເໝາະສົມ.

**2. ໂຄງລ່າງພື້ນຖານທາງດ້ານເຕັກນິກຂອງທ່າເຮືອທ້ອງຖິ່ນ ມີ ດັ່ງນີ້:**

1) ທາງຂຶ້ນ-ລົງທ່າເຮືອ ຢ່າງໜ້ອຍ ສອງຊ່ອງທາງຈະລາຈອນ;

2) ປະຕູເຂົ້າ-ອອກ ແລະ ຮົ້ວອ້ອມຮອບ;

3) ຂັ້ນໄດ ຂຶ້ນ-ລົງ ທ່າທຽບເຮືອ ສຳລັບ ຜູ້ໂດຍສານ;

4) ຈຸດກອດກາສິນຄ້າ;

5) ສາງໃນຮົ່ມ ແລະ ສາງກາງແຈ້ງ;

6) ຈຸດບໍລິການນ້ຳມັນເຊື້ອໄຟ;

7) ລານຈອດລົດບັນທຸກ;

8) ລະບົບ ມອດໄຟ ແລະ ໄຟຟ້າສຳຮອງ;

9) ຫ້ອງນ້ຳສາທາລະນະ, ລະບົບລະບາຍນ້ຳ, ປ້ອມຍາມເຂົ້າ-ອອກ, ເຄື່ອງກະຈາຍສຽງ ແລະ ບ່ອນເກັບມ້ຽນຂີ້ເຫຍື້ອ;

10) ອາຄານຜູ້ໂດຍສານ, ຫ້ອງບໍລິການ ແລະ ຫ້ອງການຄຸ້ມຄອງ;

11) ສະຖານທີ່ຈອດຍານພາຫະນະ ແລະ ພື້ນທີ່ສາທາລະນະ ຕາມຄວາມເໝາະສົມ.

**3. ໂຄງລ່າງພື້ນຖານທາງດ້ານເຕັກນິກຂອງທ່າເຮືອປະເພນີ ມີ ດັ່ງນີ້:**

1) ທາງຂຶ້ນ-ລົງທ່າທຽບເຮືອ;

2) ປະຕູເຂົ້າ-ອອກ ແລະ ຮົ້ວອ້ອມຮອບ;

3) ຫ້ອງບໍລິການ, ຫ້ອງການຄຸ້ມຄອງ;

4) ສາງໃນຮົ່ມ ແລະ ສາງກາງແຈ້ງ;

5) ຈຸດກອດກາ ເຮືອ ແລະ ລົດບັນທຸກສິນຄ້າ;

6) ຫ້ອງນ້ຳສາທາລະນະ, ລະບົບລະບາຍນ້ຳ;

7) ສະຖານທີ່ຈອດຍານພາຫະນະ ແລະ ພື້ນທີ່ສາທາລະນະ ຕາມຄວາມເໝາະສົມ.

**ມາດຕາ 22 ຍານພາຫະນະກົນຈັກ ແລະ ອຸປະກອນ**

**1. ຍານພາຫະນະກົນຈັກ ແລະ ອຸປະກອນ ສຳລັບທ່າເຮືອສາກົນ ມີ ດັ່ງນີ້:**

1) ລົດຍົກຍໍ (Fork Lift);

2) ລົດຄີບຕູ້ສິນຄ້າ (Reach Stacker);

3) ເຄື່ອງຍົກຕູ້ສິນຄ້າຂະໜາດໃຫຍ່ (Gantry Crane);

4) ຖ້ານຮອງຮັບສິນຄ້າຂະໜາດໃຫຍ່ (Heavy Duty Shelf Super Rack);

5) ຖ້ານຮອງສິນຄ້າ (Pallet);

6) ເຄື່ອງສາຍລັງສີ (X-Ray);

7) ຕູ້ສິນຄ້າ (Container).

**2. ກົນຈັກພາຫະນະ ແລະ ອຸປະກອນ ສຳລັບທ່າເຮືອ ທ້ອງຖິ່ນ ແລະ ປະເພນີ ມີ ດັ່ງນີ້:**

1) ລົດຍົກຍໍ (Fork Lift);

2) ຖ້ານຮອງສິນຄ້າ (Pallet);

3) ອຸປະກອນອື່ນ ທີ່ຈຳເປັນ.

ມາດຕາ 23 ລະບົບເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ

**1. ລະບົບເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ຂອງທ່າເຮືອສາກົນ ມີ ດັ່ງນີ້:**

1) ລະບົບອ່ານຂໍ້ມູນດ້ວຍເອເລັກໂຕຣນິກ (Electronic Data Reading System);

2) ລະບົບຕິດຕາມ ຍານພາຫະນະ ແລະ ຕູ້ສິນຄ້າ (Vehicle and Container Tracking System, GPS);

3) ລະບົບການເງິນຜ່ານທະນາຄານດ້ວຍເຄື່ອງເອເລັກໂຕຣນິກ (E-Banking System);

4) ລະບົບບັນຊີແບບອອນລາຍ (Online Accounting System);

5) ລະບົບແຈ້ງພາສີແບບເອເລັກໂຕຣນິກ (Automated System for Customs Data);

6) ລະບົບຄຸ້ມຄອງການຄົ່ນຖ່າຍ, ບັນຈຸ ແລະ ຄວບຄຸມ ການເຄື່ອນຍ້າຍສິນຄ້າ;

7) ລະບົບຄຸ້ມຄອງສາງສິນຄ້າ (Warehouse Management System);

8) ລະບົບຄຸ້ມຄອງການແຈກຢາຍສິນຄ້າ (Distribution Management System);

9) ລະບົບຄຸ້ມຄອງພະນັກງານ (Staff Management System);

10) ໂຄງລ່າງພື້ນຖານທາງດ້ານຂ່າວສານເຕັກໂນໂລຊີ (Information Technology Infrastructure).

**2. ລະບົບເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ຂອງທ່າເຮືອທ້ອງຖິ່ນ ມີ ດັ່ງນີ້:**

1) ລະບົບອ່ານຂໍ້ມູນດ້ວຍເອເລັກໂຕຣນິກ (Electronic Data Reading System);

2) ລະບົບການເງິນຜ່ານທະນາຄານດ້ວຍເຄື່ອງເອເລັກໂຕຣນິກ (E-Banking System);

3) ລະບົບບັນຊີແບບອອນລາຍ (Online Accounting System);

4) ລະບົບຄຸ້ມຄອງການຄົ່ນຖ່າຍ, ບັນຈຸ ແລະ ຄວບຄຸມ ການເຄື່ອນຍ້າຍສິນຄ້າ;

5) ລະບົບຄຸ້ມຄອງສາງສິນຄ້າ (Warehouse Management System);

6) ລະບົບຄຸ້ມຄອງການແຈກຢາຍສິນຄ້າ (Distribution Management System);

7) ລະບົບຄຸ້ມຄອງພະນັກງານ (Staff Management System);

8) ໂຄງລ່າງພື້ນຖານທາງດ້ານຂ່າວສານເຕັກໂນໂລຊີ (Information Technology Infrastructure).

**3. ລະບົບເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ຂອງທ່າເຮືອປະເພນີ ມີ ດັ່ງນີ້:**

1) ລະບົບການເງິນຜ່ານທະນາຄານດ້ວຍເຄື່ອງເອເລັກໂຕຣນິກ (E-Banking System);

2) ລະບົບຄຸ້ມຄອງການແຈກຢາຍສິນຄ້າ (Distribution Management System);

3) ລະບົບຄຸ້ມຄອງພະນັກງານ (Staff Management System).

ມາດຕາ 24 ລະບົບຄວາມປອດໄພ

**1. ລະບົບຄວາມປອດໄພ ທີ່ຈຳເປັນ ຂອງທ່າເຮືອ ສາກົນ ແລະ ທ້ອງຖິ່ນ ມີ ດັ່ງນີ້:**

1) ລະບົບກ້ອງວົງຈອນປິດ;

2) ລະບົບປ້ອງກັນຄວາມປອດໄພ;

3) ລະບົບປ້ອງກັນອັກຄີໄພ;

4) ລະບົບຮັກສາຄວາມປອດໄພ;

5) ລະບົບກັນຟ້າຜ່າ.

**2. ລະບົບຄວາມປອດໄພ ທີ່ຈຳເປັນ ຂອງທ່າເຮືອປະເພນີ ມີ ດັ່ງນີ້:**

1) ລະບົບກ້ອງວົງຈອນປິດ;

2) ລະບົບປ້ອງກັນຄວາມປອດໄພ;

3) ລະບົບປ້ອງກັນອັກຄີໄພ;

4) ລະບົບຮັກສາຄວາມປອດໄພ.

ນອກຈາກນີ້, ຍັງມີລະບົບຄວາມປອດໄພອື່ນ ທີ່ຈຳເປັນ ຊຶ່ງຂຶ້ນກັບ ຮູບແບບ ແລະ ຈຸດພິເສດ ຂອງແຕ່ລະທ່າເຮືອ.

## ໝວດທີ 6
## ການຂໍອະນຸຍາດພັດທະນາທ່າເຮືອ

### ມາດຕາ 25 ການຂໍອະນຸຍາດພັດທະນາທ່າເຮືອ

ບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງພັດທະນາທ່າເຮືອແຕ່ລະຮູບແບບ ຕ້ອງຍື່ນຄຳຮ້ອງຂໍອະນຸຍາດພັດທະນາຕາມແບບພິມຕໍ່ ຫ້ອງການບໍລິການການລົງທຶນປະຕູດຽວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ.

ໃນກໍລະນີມີຜູ້ຕ້ອງການພັດທະນາທ່າເຮືອແຕ່ສອງຄົນຂຶ້ນໄປ ໃຫ້ດຳເນີນການຄັດເລືອກຜູ້ພັດທະນາດ້ວຍຮູບການປະມູນ.

### ມາດຕາ 26 ເງື່ອນໄຂຂອງຜູ້ພັດທະນາທ່າເຮືອ

ຜູ້ພັດທະນາທ່າເຮືອ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນ ນິຕິບຸກຄົນ ຫຼື ການຈັດຕັ້ງ;

2. ມີຖານະດ້ານການເງິນ ຫຼື ແຫຼ່ງທຶນ ທີ່ໄດ້ຮັບການຢັ້ງຢືນຈາກສະຖາບັນການເງິນ ພາຍໃນ ຫຼື ຕ່າງປະເທດ;

3. ມີປະສົບການ, ມີບຸກຄະລາກອນ ກ່ຽວກັບວຽກງານ ທ່າເຮືອ, ໂລຊິດສະຕິກ, ການຄ້າ ແລະ ການຂົນສົ່ງສິນຄ້າ;

4. ບໍ່ເຄີຍຖືກສານຕັດສິນໃຫ້ລົ້ມລະລາຍ.

### ມາດຕາ 27 ເອກະສານປະກອບຂໍອະນຸຍາດພັດທະນາທ່າເຮືອ

ເອກະສານປະກອບຂໍອະນຸຍາດພັດທະນາທ່າເຮືອ ມີ ດັ່ງນີ້:

1. ໃບຄຳຮ້ອງ;
2. ຊີວະປະຫວັດ;
3. ໃບຢັ້ງຢືນທີ່ຢູ່ປະຈຸບັນ ອາຍຸບໍ່ເກີນ 03 ເດືອນ;
4. ສຳເນົາ ບັດປະຈຳຕົວ, ສຳລັບນັກລົງທຶນຕ່າງປະເທດ ຕ້ອງມີໜັງສືຜ່ານແດນ (Passport);
5. ທະບຽນວິສາຫະກິດ;
6. ບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນການດຳເນີນທຸລະກິດ;
7. ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ;
8. ໃບຢັ້ງຢືນຖານະການເງິນ ຫຼື ແຫຼ່ງທຶນ ຈາກສະຖາບັນການເງິນ ພາຍໃນ ຫຼື ຕ່າງປະເທດ;
9. ກົດລະບຽບຂອງບໍລິສັດ.

**ມາດຕາ 28 ຂັ້ນຕອນການອະນຸຍາດພັດທະນາທ່າເຮືອ**

**1. ການອະນຸຍາດພັດທະນາທ່າເຮືອສາກົນ ມີ ຂັ້ນຕອນ ດັ່ງນີ້:**

1) ພາຍຫຼັງໄດ້ຮັບຄຳຮ້ອງຂໍອະນຸຍາດພັດທະນາທ່າເຮືອ ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ຄົ້ນຄວ້າໂດຍປະສານສົມທົບກັບ ກົມທີ່ກ່ຽວຂ້ອງ ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ແລ້ວນຳສະເໜີຕໍ່ ກະຊວງການເງິນ;

2) ກະຊວງການເງິນ ຄົ້ນຄວ້າ ແລະ ສະເໜີຕໍ່ ລັດຖະບານ ເພື່ອພິຈາລະນາອະນຸມັດລົງນາມບົດບັນທຶກຄວາມເຂົ້າໃຈສຶກສາຄວາມເປັນໄປໄດ້ ກ່ຽວກັບການພັດທະນາທ່າເຮືອ;

3) ພາຍຫຼັງລັດຖະບານອະນຸມັດແລ້ວ, ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກຳນົດກອບໜ້າວຽກເຕັກນິກ ແລ້ວກະຊວງການເງິນ ເປັນຜູ້ລົງນາມບົດບັນທຶກຄວາມເຂົ້າໃຈສຶກສາຄວາມເປັນໄປໄດ້;

4) ຜູ້ພັດທະນາທ່າເຮືອ ດຳເນີນການສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ ກ່ຽວກັບການພັດທະນາທ່າເຮືອ ຕາມການກຳນົດໃນກອບໜ້າວຽກເຕັກນິກ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ໃຫ້ສຳເລັດພາຍໃນກຳນົດເວລາ ບໍ່ໃຫ້ເກີນ 24 ເດືອນ;

5) ຜູ້ພັດທະນາທ່າເຮືອ ດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລ້ວສະເໜີຕໍ່ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຮັບຮອງຕາມ ກົດໝາຍ ແລະ ລະບຽບການ;

6) ກະຊວງໂຍທາທິການ ແລະ ຂົນສົ່ງ ປະສານສົມທົບກັບ ກະຊວງການເງິນ, ກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ຮັບຮອງເອົາຮ່າງບົດລາຍງານການສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ ກ່ຽວກັບການພັດທະນາທ່າເຮືອ;

7) ກະຊວງການເງິນ ສັງລວມລາຍງານຜົນຂອງການສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ ຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງ ແລະ ຂໍອະນຸມັດເຈລະຈາກັບຜູ້ພັດທະນາ ເພື່ອເຊັນສັນຍາສຳປະທານ.

**2. ການອະນຸຍາດພັດທະນາທ່າເຮືອທ້ອງຖິ່ນ ແລະ ປະເພນີ ມີ ຂັ້ນຕອນ ດັ່ງນີ້:**

1) ພາຍຫຼັງໄດ້ຮັບຄຳຮ້ອງຂໍອະນຸຍາດພັດທະນາທ່າເຮືອທ້ອງຖິ່ນ ແລະ ປະເພນີ ຂະແໜງທາງນ້ຳ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ ເປັນຜູ້ຄົ້ນຄວ້າໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລ້ວນຳສະເໜີຕໍ່ ກະຊວງໂຍທາທິການ ແລະ ຂົນສົ່ງ;

2) ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ ສະເໜີຕໍ່ ພະແນກການເງິນ ນະຄອນຫຼວງ, ແຂວງ ເພື່ອຄົ້ນຄວ້າ ແລະ ນຳສະເໜີຕໍ່ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອພິຈາລະນາອະນຸມັດລົງນາມບົດບັນທຶກຄວາມເຂົ້າໃຈສຶກສາຄວາມເປັນໄປໄດ້ ກ່ຽວກັບ ການພັດທະນາທ່າເຮືອ;

3) ຜູ້ພັດທະນາທ່າເຮືອ ດຳເນີນການສຶກສາຄວາມເປັນໄປໄດ້ ກ່ຽວກັບການພັດທະນາທ່າເຮືອ ໂດຍສອດຄ່ອງກັບການກຳນົດກອບໜ້າວຽກ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ ໃຫ້ສຳເລັດ ພາຍໃນກຳນົດເວລາ 12 ເດືອນ;

4) ຜູ້ພັດທະນາທ່າເຮືອ ດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ແຜນນຳໃຊ້ທີ່ດິນ ແລ້ວສະເໜີຕໍ່ ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງ, ແຂວງ ຮັບຮອງຕາມກົດໝາຍ;

5) ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ ປະສານສົມທົບກັບ ພະແນກການ ແລະ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຄົ້ນຄວ້າ ແລະ ຮັບຮອງເອົາ ບົດລາຍງານການສຶກສາຄວາມເປັນໄປໄດ້ ກ່ຽວກັບການພັດທະນາທ່າເຮືອ ແລ້ວລາຍງານຕໍ່ພະແນກການເງິນ ນະຄອນຫຼວງ, ແຂວງ ເພື່ອສະເໜີຕໍ່ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ພິຈາລະນາອະນຸມັດລົງນາມສັນຍາສຳປະທານ;

6) ຜູ້ພັດທະນາທ່າເຮືອ ຕ້ອງສ້າງຕັ້ງວິສາຫະກິດ ແລະ ຂໍອະນຸຍາດດຳເນີນທຸລະກິດ ຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 29 ການໃຫ້ບໍລິການຂອງຜູ້ພັດທະນາທ່າເຮືອ**

**1. ການໃຫ້ບໍລິການຂອງຜູ້ພັດທະນາທ່າເຮືອສາກົນ ມີ ດັ່ງນີ້:**

1) ເຮືອ ເຂົ້າ-ອອກ ທຽບທ່າ;
2) ຂົນສົ່ງ ຜູ້ໂດຍສານ, ສິນຄ້າ ແລະ ຍານພາຫະນະ;
3) ເຕົ້າໂຮມ, ຄັດແຍກ, ເກັບມ້ຽນ, ແຈກຢາຍ ແລະ ຈັດສົ່ງ ສິນຄ້າ (Cross Docking);
4) ລານ ຄ່ຽນຖ່າຍ ແລະ ກອງ ສິນຄ້າ (Bulk Cargo);
5) ຍົກຍໍ-ຄ່ຽນຖ່າຍສິນຄ້າ ຂຶ້ນ-ລົງ, ຄ່ຽນຖ່າຍສິນຄ້າ;
6) ລານ ເກັບຮັກສາ ແລະ ບໍລິການ ຕູ້ສິນຄ້າ;
7) ລານຈອດຍານພາຫະນະຂົນສົ່ງສິນຄ້າ;
8) ລະບົບສາງ, ສາງ ເກັບມ້ຽນສິນຄ້າຊົ່ວຄາວ, ໃນຮົ່ມ, ກາງແຈ້ງ;
9) ຕິດສະຫຼາກ, ບັນຈຸຫີບຫໍ່, ໃສ່ບາໂຄດ, ຄິວອາໂຄດ;
10) ຈັດສົ່ງ;
11) ແຈ້ງພາສີ;
12) ແຈ້ງກວດກາພືດ-ສັດ;
13) ປະກັນໄພ ແລະ ການທະນາຄານ;
14) ກິດຈະການອື່ນທີ່ໄດ້ຮັບອະນຸຍາດຈາກລັດຖະບານ.

**2. ການໃຫ້ບໍລິການຂອງຜູ້ພັດທະນາທ່າເຮືອທ້ອງຖິ່ນ ມີ ດັ່ງນີ້:**

1) ເຮືອ ເຂົ້າ-ອອກ ທຽບທ່າ;
2) ຂົນສົ່ງ ຜູ້ໂດຍສານ, ສິນຄ້າ ແລະ ຍານພາຫະນະ;
3) ເຕົ້າໂຮມ, ຄັດແຍກ, ເກັບມ້ຽນ, ແຈກຢາຍ ແລະ ຈັດສົ່ງ ສິນຄ້າ (Cross Docking);
4) ລານ ຄ່ຽນຖ່າຍ ແລະ ກອງ ສິນຄ້າ (Bulk Cargo);
5) ຍົກຍໍ-ຄ່ຽນຖ່າຍສິນຄ້າ ຂຶ້ນ-ລົງ, ຄ່ຽນຖ່າຍສິນຄ້າ;
6) ລານຈອດຍານພາຫະນະຂົນສົ່ງສິນຄ້າ;
7) ລະບົບສາງ, ສາງ ເກັບມ້ຽນສິນຄ້າຊົ່ວຄາວ, ໃນຮົ່ມ, ກາງແຈ້ງ;
8) ຕິດສະຫຼາກ, ບັນຈຸຫີບຫໍ່, ໃສ່ບາໂຄດ, ຄິວອາໂຄດ;
9) ຈັດສົ່ງ;
10) ແຈ້ງກວດກາພືດ-ສັດ;
11) ກິດຈະການອື່ນທີ່ໄດ້ຮັບອະນຸຍາດຈາກ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ.

**3. ການໃຫ້ບໍລິການຂອງຜູ້ພັດທະນາທ່າເຮືອປະເພນີ ມີ ດັ່ງນີ້:**

1) ເຮືອ ເຂົ້າ-ອອກ ທຽບທ່າ;
2) ຂົນສົ່ງ ຜູ້ໂດຍສານ, ສິນຄ້າ ແລະ ຍານພາຫະນະ;

3) ຍົກຍໍ-ຄ່ຽນຖ່າຍສິນຄ້າ ຂຶ້ນ-ລົງ, ຄ່ຽນຖ່າຍສິນຄ້າ;

4) ລານຈອດຍານພາຫະນະຂົນສົ່ງສິນຄ້າ;

5) ລະບົບສາງ, ສາງ ເກັບມ້ຽນສິນຄ້າຊົ່ວຄາວ, ໃນຮົ່ມ, ກາງແຈ້ງ;

6) ຈັດສົ່ງ;

7) ແຈ້ງກວດກາພືດ-ສັດ;

8) ກິດຈະການອື່ນທີ່ໄດ້ຮັບອະນຸຍາດຈາກ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ.

**ມາດຕາ 30 ສິດຂອງຜູ້ພັດທະນາທ່າເຮືອ**

ຜູ້ພັດທະນາທ່າເຮືອ ມີສິດ ດັ່ງນີ້:

1. ໄດ້ຮັບການສົ່ງເສີມ ແລະ ອຳນວຍຄວາມສະດວກໃນການພັດທະນາທ່າເຮືອ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ຈາກ ການລົງທຶນ ພັດທະນາທ່າເຮືອ ທີ່ຕົນໄດ້ຮັບອະນຸຍາດ;

3. ຄັດເລືອກ ແລະ ເຮັດສັນຍາດຳເນີນທຸລະກິດກັບຜູ້ລົງທຶນກິດຈະການ;

4. ໄດ້ຮັບຜົນປະໂຫຍດຈາກການໃຫ້ເຊົ່າ, ນຳໃຊ້ທີ່ດິນຕາມອາຍຸສັນຍາສຳປະທານ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ;

5. ເປັນເຈົ້າກຳມະສິດ ຕໍ່ ຊັບສິນທີ່ຕົນໄດ້ພັດທະນາຢູ່ໃນທ່າເຮືອຕາມສັນຍາ;

6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 31 ພັນທະຂອງຜູ້ພັດທະນາທ່າເຮືອ**

ຜູ້ພັດທະນາທ່າເຮືອ ມີ ພັນທະ ດັ່ງນີ້:

1. ປະຕິບັດຕາມສັນຍາພັດທະນາ, ແຜນແມ່ບົດພັດທະນາ, ບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ-ສັງຄົມ, ແຜນການຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ;

2. ເສຍ ພາສີ, ອາກອນ, ຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຢ່າງຄົບຖ້ວນ ຕາມສັນຍາພັດທະນາ, ກົດໝາຍ ແລະ ລະບຽບການ;

3. ໃຫ້ການຮ່ວມມືກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ, ປະກອບສ່ວນໃນການພັດທະນາທ້ອງຖິ່ນ ເປັນຕົ້ນ ການບູລະນະຮັກສາຄອງເດີນເຮືອ, ປ້ອງກັນຕາຝັ່ງເຈື່ອນ, ການປູກຈິດສຳນຶກດ້ານຄວາມປອດໄພທາງນ້ຳ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ວຽກງານສາທາລະນະສຸກ, ການແກ້ໄຂເຫດການສຸກເສີນທາງນ້ຳ;

4. ຖືບັນຊີ ຕາມກົດໝາຍ ວ່າດ້ວຍການບັນຊີ ໃນກໍລະນີຈຳເປັນ ກໍ່ສາມາດນຳໃຊ້ລະບົບບັນຊີສາກົນ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການການເງິນ;

5. ນຳໃຊ້, ພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ເຕັກໂນໂລຊີ ໃຫ້ແກ່ຜູ້ອອກແຮງງານລາວ ໂດຍສະເພາະເພດຍິງ ແລະ ຊົນເຜົ່າ;

6. ເຂົ້າລະບົບປະກັນສັງຄົມ;

7. ສະຫຼຸບ ແລະ ລາຍງານການດຳເນີນທຸລະກິດຂອງຕົນຕໍ່ ຂະແໜງການເງິນ, ຂະແໜງການ ໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

8. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການລົງທຶນກິດຈະການໃນຂອບເຂດຂອງທ່າເຮືອ

### ມາດຕາ 32 ປະເພດການລົງທຶນກິດຈະການ

**1. ປະເພດການລົງທຶນກິດຈະການໃນຂອບເຂດຂອງທ່າເຮືອສາກົນ ມີ ດັ່ງນີ້:**

1) ບໍລິການຂາຍປີ້;
2) ສາງສິນຄ້າ;
3) ຄ່ຽນຖ່າຍສິນຄ້າ;
4) ການຫຸ້ມຫໍ່;
5) ລານຕູ້ສິນຄ້າ;
6) ສ້ອມແປງຕູ້ສິນຄ້າ;
7) ການຂ້າເຊື້ອພະຍາດ;
8) ກິດຈະການອື່ນ.

**2. ປະເພດການລົງທຶນກິດຈະການໃນຂອບເຂດຂອງທ່າເຮືອທ້ອງຖິ່ນ ມີ ດັ່ງນີ້:**

1) ບໍລິການຂາຍປີ້;
2) ສາງສິນຄ້າ;
3) ຄ່ຽນຖ່າຍສິນຄ້າ;
4) ການຫຸ້ມຫໍ່;
5) ການຂ້າເຊື້ອພະຍາດ;
6) ກິດຈະການອື່ນ.

**3. ປະເພດການລົງທຶນກິດຈະການໃນຂອບເຂດຂອງທ່າເຮືອປະເພນີ ມີ ດັ່ງນີ້:**

1) ບໍລິການຂາຍປີ້;
2) ສາງສິນຄ້າ;
3) ຄ່ຽນຖ່າຍສິນຄ້າ;
4) ການຂ້າເຊື້ອພະຍາດ;
5) ກິດຈະການອື່ນ.

### ມາດຕາ 33 ການສະເໜີຂໍລົງທຶນກິດຈະການ

ນິຕິບຸກຄົນ ທີ່ມີຈຸດປະສົງລົງທຶນກິດຈະການໃນຂອບເຂດຂອງທ່າເຮືອ ໃຫ້ສະເໜີຕໍ່ຜູ້ພັດທະນາທ່າເຮືອແຕ່ລະຮູບແບບ.

ສຳລັບຜູ້ພັດທະນາ ທີ່ມີຈຸດປະສົງລົງທຶນກິດຈະການໃດໜຶ່ງ ໃນທ່າເຮືອທີ່ຕົນພັດທະນາ ທີ່ບໍ່ນອນໃນການໃຫ້ບໍລິການຕາມທີ່ກຳນົດໄວ້ໃນ ມາດຕາ 29 ຂອງຂໍ້ຕົກລົງສະບັບນີ້ ຕ້ອງສ້າງເປັນນິຕິບຸກຄົນໃໝ່ ແລະ ໃຫ້ປະຕິບັດຕາມ ໝວດທີ 5 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 34 ເງື່ອນໄຂຜູ້ລົງທຶນກິດຈະການ**

ຜູ້ລົງທຶນກິດຈະການໃນຂອບເຂດຂອງທ່າເຮືອ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນ;

2. ໄດ້ຮັບອະນຸຍາດການດຳເນີນທຸລະກິດຈາກຂະແໜງການທີ່ກ່ຽວຂ້ອງ;

3. ມີບຸກຄະລາກອນທີ່ມີຄວາມຮູ້ ແລະ ປະສົບການ ກ່ຽວກັບກິດຈະການທີ່ຈະໃຫ້ບໍລິການນັ້ນ;

4. ມີທຶນພຽງພໍທີ່ເໝາະສົມກັບ ປະເພດ ແລະ ຂະໜາດ ຂອງກິດຈະການ;

5. ມີອຸປະກອນ, ເຄື່ອງມື ແລະ ຍານພາຫະນະທີ່ໄດ້ມາດຕະຖານ, ທັນສະໄໝ ແລະ ເໝາະສົມກັບຂະໜາດຂອງກິດຈະການ;

6. ບໍ່ເຄີຍຖືກສານຕັດສິນໃຫ້ລົ້ມລະລາຍ.

**ມາດຕາ 35 ເອກະສານປະກອບຂໍອະນຸຍາດລົງທຶນກິດຈະການ**

ເອກະສານປະກອບຂໍອະນຸຍາດລົງທຶນກິດຈະການໃນຂອບເຂດຂອງທ່າເຮືອ ມີ ດັ່ງນີ້:

1. ໜັງສືສະເໜີຂໍລົງທຶນ;

2. ໃບຢັ້ງຢືນທີ່ຢູ່ ບໍ່ເກີນ 03 ເດືອນ;

3. ສຳເນົາ ບັດປະຈຳຕົວ, ສຳລັບນັກລົງທຶນຕ່າງປະເທດ ຕ້ອງມີໜັງສືຜ່ານແດນ;

4. ໃບທະບຽນວິສາຫະກິດ;

5. ໃບອະນຸຍາດດຳເນີນທຸລະກິດ;

6. ບົດວິພາກເສດຖະກິດ-ເຕັກນິກ ຫຼື ແຜນທຸລະກິດ;

7. ກົດລະບຽບພາຍໃນຂອງວິສາຫະກິດ;

8. ເອກະສານຢັ້ງຢືນຖານະການເງິນຈາກສະຖາບັນການເງິນ.

**ມາດຕາ 36 ສິດຂອງຜູ້ລົງທຶນກິດຈະການ**

ຜູ້ລົງທຶນກິດຈະການໃນຂອບເຂດຂອງທ່າເຮືອ ມີສິດ ດັ່ງນີ້:

1. ໄດ້ຮັບການສົ່ງເສີມ ແລະ ອຳນວຍຄວາມສະດວກຈາກ ພາກລັດ ແລະ ຜູ້ພັດທະນາ ໃນການລົງທຶນກິດຈະການ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ;

2. ໄດ້ຮັບການປົກປ້ອງການລົງທຶນຈາກ ພາກລັດກ່ຽວກັບ ສິດ ແລະ ຜົນປະໂຫຍດອັນຊອບທຳທີ່ໄດ້ມາຈາກການລົງທຶນກິດຈະການຂອງຕົນ;

3. ນຳໃຊ້ທີ່ດິນຕາມສັນຍາລົງທຶນກິດຈະການ ໂດຍສອດຄ່ອງກັບ ກົດໝາຍ ແລະ ລະບຽບການ;

4. ເປັນເຈົ້າກຳມະສິດຕໍ່ຊັບສິນໃນການລົງທຶນກິດຈະການຂອງຕົນຕາມສັນຍາ;

5. ໄດ້ຮັບສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 37 ພັນທະຂອງຜູ້ລົງທຶນກິດຈະການຂອງທ່າເຮືອ**

ຜູ້ລົງທຶນກິດຈະການຂອງທ່າເຮືອ ມີພັນທະ ດັ່ງນີ້:

1. ດຳເນີນກິດຈະການຕາມການອະນຸຍາດ;

2. ເສຍຄ່າເຊົ່າໃຫ້ຜູ້ພັດທະນາ;

3. ເສຍ ພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ຕາມ ກົດໝາຍ ແລະ ລະບຽບການ;

4. ສະຫຼຸບລາຍງານ ການດຳເນີນກິດຈະການຂອງຕົນຕໍ່ຜູ້ພັດທະນາທ່າເຮືອ ຢ່າງເປັນປົກກະຕິ;

5. ໃຫ້ຄວາມຮ່ວມມືກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 38 ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການ ໃນທ່າເຮືອ ມີ ດັ່ງນີ້:

1. ຄ່າທຳນຽມ ແລະ ຄ່າບໍລິການ ຂອງພາກລັດ ເປັນຕົ້ນຄ່າທຽບທ່າເພື່ອຄ່ຽນຖ່າຍສິນຄ້າ, ຄ່າທຽບທ່າເພື່ອລໍຖ້າຂົນສົ່ງສິນຄ້າ ໃນຂອບເຂດຂອງທ່າເຮືອ;

2. ຄ່າບໍລິການ ຂອງຜູ້ພັດທະນາທ່າເຮືອ ແລະ ຜູ້ລົງທຶນກິດຈະການເປັນຕົ້ນ ຄ່າຍົກຍໍຄ່ຽນຖ່າຍ, ຄ່າຝາກສາງ, ຄ່າຈອດລົດຂົນສົ່ງ, ຄ່າຝາກຕູ້ສິນຄ້າ.

**ມາດຕາ 39 ການເກັບຄ່າທຳນຽມ ແລະ ຄ່າບໍລິການ**

ອັດຕາ ແລະ ການເກັບຄ່າທຳນຽມ ແລະ ຄ່າບໍລິການຂອງພາກລັດໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດທີ່ໄດ້ກຳນົດໄວ້ໃນແຕ່ລະໄລຍະ.

ອັດຕາ ແລະ ການເກັບຄ່າບໍລິການຂອງ ຜູ້ພັດທະນາທ່າເຮືອ ແລະ ຜູ້ລົງທຶນກິດຈະການໃນທ່າເຮືອໃຫ້ພວກກ່ຽວຄົ້ນຄວ້າ ແລ້ວນຳສະເໜີຕໍ່ຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ພິຈາລະນາຮັບຮອງ.

## ໝວດທີ 9
## ຂໍ້ຫ້າມ

**ມາດຕາ 40 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ປຸກສ້າງ ແລະ ກໍ່ສ້າງກິດຈະການໃດໜຶ່ງ ທີ່ເປັນການຊົ່ວຄາວ ຫຼື ຖາວອນ ໃນເຂດສະຫງວນທ່າເຮືອ ໂດຍບໍ່ໄດ້ຮັບອະນຸຍາດ;

2. ຂັດຂວາງ ແລະ ບໍ່ອຳນວຍຄວາມສະດວກ ຫຼື ບໍ່ໃຫ້ການຮ່ວມມືໃນການດຳເນີນກິດຈະການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທ່າເຮືອ;

3. ບຸກລຸກເຂດສະຫງວນຂອງທ່າເຮືອ, ມ້າງເພ, ທຳລາຍໂຄງປະກອບຂອງທ່າເຮືອ;

4. ຍົກຍ້າຍ, ທຳລາຍ ອຸປະກອນ, ໄຟສັນຍານ, ປ້າຍຈະລາຈອນ ແລະ ປ້າຍຊີ້ບອກ ຢູ່ໃນບໍລິເວນທ່າເຮືອ;

5. ລ້ຽງ, ປ່ອຍ ແລະ ເຄື່ອນຍ້າຍ ສັດລ້ຽງໃນບໍລິເວນທ່າເຮືອ ໂດຍບໍ່ໄດ້ຮັບອະນຸຍາດ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 41 ຂໍ້ຫ້າມສຳລັບຜູ້ພັດທະນາທ່າເຮືອ**

ຫ້າມຜູ້ພັດທະນາທ່າເຮືອ ມີພຶດຕິກຳ ດັ່ງນີ້:

1. ເອົາໃບອະນຸຍາດສ້າງຕັ້ງທ່າເຮືອຂອງຕົນໃຫ້ຜູ້ອື່ນນຳໃຊ້, ໃຫ້ເຊົ່າ ຫຼື ໂອນໃຫ້ຜູ້ອື່ນ;

2. ປິດທ່າເຮືອ, ນຳໃຊ້ທ່າເຮືອເຂົ້າໃນເປົ້າໝາຍອື່ນໂດຍບໍ່ໄດ້ຮັບອະນຸຍາດຈາກ ຂະແໜງການໂຍທາທິການ ແລະ ຂົນສົ່ງ;

3. ດໍາເນີນກິດຈະການໃນທ່າເຮືອ ບໍ່ຖືກຕ້ອງຕາມສັນຍາສໍາປະທານ ແລະ ກົດໝາຍ;

4. ສໍາຫຼວດ-ອອກແບບ ແລະ ກໍ່ສ້າງສິ່ງປຸກສ້າງບໍ່ສອດຄ່ອງກັບແຜນຜັງເຕັກນິກ ທີ່ໄດ້ຮັບຮອງ;

5. ຜູກຂາດ ແລະ ໃຫ້ບູລິມະສິດ ໃນການບໍລິການ ແກ່ບຸກຄົນ ຫຼື ພາກສ່ວນໃດໜຶ່ງ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 42 ຂໍ້ຫ້າມສໍາລັບຜູ້ລົງທຶນກິດຈະການໃນທ່າເຮືອ**

ຫ້າມຜູ້ລົງທຶນກິດຈະການໃນທ່າເຮືອ ມີພຶດຕິກໍາ ດັ່ງນີ້:

1. ໃຫ້ເຊົ່າ ຫຼື ໂອນກິດຈະການໃນທ່າເຮືອ ໃຫ້ຜູ້ທີ່ບໍ່ມີໃບ ອະນຸຍາດດໍາເນີນທຸລະກິດ ແລະ ບໍ່ໄດ້ຮັບການເຫັນດີຈາກຜູ້ພັດທະນາທ່າເຮືອ;

2. ປິດ, ນໍາໃຊ້ ກິດຈະການ ໃນທ່າເຮືອ ເຂົ້າໃນເປົ້າໝາຍອື່ນ ໂດຍບໍ່ໄດ້ຮັບການເຫັນດີຈາກຜູ້ພັດທະນາທ່າເຮືອ;

3. ດໍາເນີນກິດຈະການບໍ່ຖືກຕ້ອງຕາມສັນຍາດໍາເນີນທຸລະກິດກັບຜູ້ພັດທະນາ ແລະ ໃບອະນຸຍາດດໍາເນີນທຸລະກິດ;

4. ດໍາເນີນການກໍ່ສ້າງໂດຍບໍ່ຖືກຕ້ອງຕາມ ແຜນຜັງ, ແຜ່ນແຕ້ມ, ກໍານົດໝາຍເຕັກນິກ, ມາດຕະຖານເຕັກນິກ ແລະ ຕາມສັນຍາ;

5. ຜູກຂາດ ແລະ ໃຫ້ບູລິມະສິດໃນການບໍລິການແກ່ບຸກຄົນ ຫຼື ພາກສ່ວນໃດໜຶ່ງ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 43 ຂໍ້ຫ້າມສໍາລັບເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ ມີພຶດຕິກໍາ ດັ່ງນີ້:

1. ດໍາເນີນທຸລະກິດ, ເປັນທີ່ປຶກສາ, ເປັນພະນັກງານວິຊາການ ໃຫ້ທຸລະກິດທ່າເຮືອ ທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;

2. ທວງເອົາ, ຂໍເອົາ, ຮັບສິນບົນ, ລໍາອຽງ, ກົດໜ່ວງຖ່ວງດຶງ, ສົມຮູ້ຮ່ວມຄິດ, ປອມແປງເອກະສານ, ສວຍໃຊ້ໜ້າທີ່ຕໍາແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ແລະ ໝູ່ຄະນະ;

3. ເມີນເສີຍ ຕໍ່ຄວາມຮັບຜິດຊອບຂອງຕົນ, ຕໍ່ພຶດຕິກໍາທີ່ບໍ່ຖືກຕ້ອງ ຂອງຜູ້ດໍາເນີນທຸລະກິດກ່ຽວກັບທ່າເຮືອ;

4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 10
## ການ ຄຸ້ມຄອງ ແລະ ກວດກາ ວຽກງານທ່າເຮືອ

**ມາດຕາ 44 ອົງການຄຸ້ມຄອງ ແລະ ກວດກາ ວຽກງານທ່າເຮືອ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄຸ້ມຄອງ ແລະ ກວດກາວຽກງານທ່າເຮືອຢ່າງລວມສູນ ໂດຍມອບໃຫ້ກົມທາງນໍ້າເປັນຜູ້ຮັບຜິດຊອບໂດຍກົງ ຕາມພາລະບົດບາດ ໃນການຄຸ້ມຄອງວຽກງານທ່າເຮືອ ທັງເປັນເຈົ້າການປະສານສົມທົບ ກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານທ່າເຮືອ ປະກອບດ້ວຍ:

1. ກົມທາງນໍ້າ ກະຊວງໂຍທາທິການ ແລະ ຂົນສົ່ງ;

2. ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ;

3. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ.

**ມາດຕາ 45 ສິດ ແລະ ໜ້າທີ່ ຂອງກົມທາງນ້ຳ ກະຊວງໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງວຽກງານທ່າເຮືອ ກົມທາງນ້ຳ ກະຊວງໂຍທາທິການ ແລະ ຂົນສົ່ງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງ ນະໂຍບາຍ, ຍຸດທະສາດ, ລະບຽບການ ແລະ ຄຳແນະນຳ ກ່ຽວກັບວຽກງານທ່າເຮືອ;

2. ຄົ້ນຄວ້າປັບປຸງກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກການກໍ່ສ້າງທ່າເຮືອ;

3. ອອກໃບອະນຸຍາດພັດທະນາ ທ່າເຮືອສາກົນ, ທ່າເຮືອເຂດເສດຖະກິດພິເສດ ແລະ ທ່າເຮືອສະເພາະ;

4. ສັ່ງໂຈະ ຫຼື ຍົກເລີກ ການດຳເນີນການກໍ່ສ້າງໂດຍບໍ່ຖືກຕ້ອງຕາມ ແຜນຜັງ, ແຜ່ນແຕ້ມ, ກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ ແລະ ຕາມສັນຍາ;

5. ປະສານສົມທົບກັບ ບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ໃນການພັດທະນາທ່າເຮືອ;

6. ພົວພັນ, ຮ່ວມມື ພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານທ່າເຮືອ;

7. ຄຸ້ມຄອງທ່າເຮືອ ໃຫ້ສອດຄ່ອງກັບກົດໝາຍ, ລະບຽບການ, ສົນທິສັນຍາ ທີ່ ສປປ ລາວເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;

8. ຄຸ້ມຄອງການສຳຫຼວດ, ອອກແບບ, ກໍ່ສ້າງ, ສ້ອມແປງ ແລະ ບູລະນະຮັກສາໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ ຂອງທ່າເຮືອ;

9. ສະຫຼຸບ ແລະ ລາຍງານ ວຽກງານທ່າເຮືອ ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ລັດຖະບານຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 46 ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ**

ໃນການຄຸ້ມຄອງວຽກງານທ່າເຮືອ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ລະບຽບການ ແລະ ຄຳແນະນຳ ກ່ຽວກັບວຽກງານທ່າເຮືອ;

2. ສະເໜີ ປັບປຸງກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກການກໍ່ສ້າງທ່າເຮືອ;

3. ອອກໃບອະນຸຍາດພັດທະນາ ທ່າເຮືອທ້ອງຖິ່ນ, ທ່າເຮືອປະເພນີ ແລະ ທ່າເຮືອພັກ ທີ່ຕັ້ງຢູ່ແມ່ນ້ຳຂອງ;

4. ສັ່ງໂຈະ ຫຼື ຍົກເລີກ ການດຳເນີນການກໍ່ສ້າງໂດຍບໍ່ຖືກຕ້ອງຕາມ ແຜນຜັງ, ແຜ່ນແຕ້ມ, ກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ ແລະ ຕາມສັນຍາ;

5. ປະສານສົມທົບກັບ ບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ໃນການພັດທະນາທ່າເຮືອ;

6. ພົວພັນ, ຮ່ວມມື ພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານທ່າເຮືອ ຕາມການມອບໝາຍ;

7. ຄຸ້ມຄອງທ່າເຮືອ ໃຫ້ສອດຄ່ອງກັບກົດໝາຍ, ລະບຽບການ, ສົນທິສັນຍາ ທີ່ ສປປ ລາວເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;

8. ຄຸ້ມຄອງການສຳຫຼວດ, ອອກແບບ, ກໍ່ສ້າງ, ສ້ອມແປງ ແລະ ບູລະນະຮັກສາໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ ຂອງທ່າເຮືອ;

9. ສະຫຼຸບ ແລະ ລາຍງານ ວຽກງານທ່າເຮືອ ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ, ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 47 ສິດ ແລະ ໜ້າທີ່ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ**

ໃນການຄຸ້ມຄອງວຽກງານທ່າເຮືອ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ລະບຽບການ ແລະ ຄຳແນະນຳ ກ່ຽວກັບວຽກງານທ່າເຮືອ;

2. ສະເໜີ ປັບປຸງກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກການກໍ່ສ້າງທ່າເຮືອ;

3. ອອກໃບອະນຸຍາດພັດທະນາ ທ່າເຮືອປະເພນີ ແລະ ທ່າເຮືອບັກ ທີ່ຕັ້ງຢູ່ນ້ຳສາຂາແມ່ນ້ຳຂອງ;

4. ສະເໜີ ສັ່ງໂຈະ ຫຼື ຍົກເລີກ ການດຳເນີນການກໍ່ສ້າງໂດຍບໍ່ຖືກຕ້ອງຕາມ ແຜນຜັງ, ແຜ່ນແຕ້ມ, ກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ ແລະ ຕາມສັນຍາ;

5. ຄຸ້ມຄອງທ່າເຮືອ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

6. ຕິດຕາມ ການສຳຫຼວດ, ອອກແບບ, ກໍ່ສ້າງ, ສ້ອມແປງ ແລະ ບູລະນະຮັກສາໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ ຂອງທ່າເຮືອ;

7. ສະຫຼຸບ ແລະ ລາຍງານ ວຽກງານທ່າເຮືອ ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ, ຄະນະກຳມະການປົກຄອງ ເມືອງ, ນະຄອນ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 48 ເນື້ອໃນກວດກາ**

ການກວດກາວຽກງານທ່າເຮືອ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ລະບຽບການ ແລະ ຄຳແນະນຳ ກ່ຽວກັບວຽກງານທ່າເຮືອ;

2. ກວດກາການເຄື່ອນໄຫວຂອງ ຜູ້ດຳເນີນທຸລະກິດກ່ຽວກັບທ່າເຮືອ;

3. ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ກ່ຽວກັບວຽກງານທ່າເຮືອ.

**ມາດຕາ 49 ຮູບການກວດກາ**

ການກວດກາວຽກງານທ່າເຮືອມີ ສາມ ຮູບການ ດັ່ງນີ້:

1. ການກວດກາຢ່າງເປັນປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີການກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ, ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ໝວດທີ 11
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 50 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ການປະກອບສ່ວນເຂົ້າໃນວຽກງານທ່າເຮືອ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 51 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກມາດຕະການ ສຶກສາ ອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາຕາມກໍລະນີ ເບົາ ຫຼື ໜັກ.

## ໝວດທີ 12
## ບົດບັນຍັດສຸດທ້າຍ

**ມາດຕາ 52 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມທາງນໍ້າ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການປະສານສົມທົບກັບພາກສ່ວນ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ຫ້ອງການ, ບັນດາກົມ, ສະຖາບັນ, ກອງ, ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ, ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ ແລະ ພາກສ່ວນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການ ຮ່ວມມື ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 53 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ງາມປະສົງ ເມືອງມະນີ